ກອງປະຊຸມໃຫຍ່ ເດືອນເມສາ 2012

**ເມື່ອເຮົາມາພົບກັນອີກ**

ໂດຍ ປະທານທອມມັສ ແອັສ ມອນສັນ

ອ້າຍເອື້ອຍນ້ອງທີ່ຮັກແພງ, ເມື່ອເຮົາມາເຕົ້າໂຮມກັນອີກເທື່ອໜຶ່ງໃນກອງປະຊຸມຂອງສາດສະໜາຈັກນີ້, ຂ້າພະເຈົ້າຂໍຕ້ອນຮັບທ່ານ ແລະ ຂໍສະແດງຄວາມຮັກຕໍ່ທ່ານທຸກຄົນ. ເຮົາໄດ້ມາພົບກັນແຕ່ລະຫົກເດືອນ ເພື່ອເພີ່ມຄວາມເຂັ້ມແຂງໃຫ້ກັນ, ໃຫ້ກຳລັງໃຈກັນ, ແລະ ປອບໂຍນກັນ, ແລະ ເສີມສ້າງສັດທາ. ເຮົາມານີ້ເພື່ອຮໍ່າຮຽນ. ພວກທ່ານບາງຄົນອາດຢາກໄດ້ຄຳຕອບຕໍ່ຄຳຖາມ ແລະ ການທ້າທາຍທີ່ທ່ານປະເຊີນຢູ່ໃນຊີວິດ. ບາງຄົນກໍກຳລັງດີ້ນລົນກັບຄວາມຜິດຫວັງ ຫລື ການສູນເສຍ. ແຕ່ລະຄົນສາມາດໃຫ້ຄວາມສະຫວ່າງ ແລະ ສິ່ງເສີມ ແລະ ປອບໃຈກັນໄດ້ ເມື່ອໄດ້ຮັບການສຳພັດຈາກພຣະວິນຍານຂອງພຣະຜູ້ເປັນເຈົ້າ.

ຖ້າຫາກມີສິ່ງໃດທີ່ຕ້ອງປັບປຸງໃນຊີວິດຂອງທ່ານ, ຂໍໃຫ້ທ່ານຈົ່ງມີເຫດຜົນ ແລະ ມີຄວາມກ້າຫານທີ່ຈະເຮັດ ໃນຂະນະທີ່ທ່ານຟັງຖ້ອຍຄຳທີ່ດົນໃຈ ຊຶ່ງຈະກ່າວ. ຂໍໃຫ້ເຮົາຈົ່ງຕັ້ງໃຈໃໝ່ ທີ່ຈະດຳລົງຊີວິດໃຫ້ສົມກັບເປັນບຸດ ແລະ ທິດາຂອງພຣະບິດາເທິງສະຫວັນ. ຂໍໃຫ້ເຮົາຈົ່ງສືບຕໍ່ຕ້ານທານກັບສິ່ງທີ່ຊົ່ວຮ້າຍ ເມື່ອເຮົາພົບເຫັນມັນຢູ່ໃນບ່ອນໃດກໍຕາມ.

ເຮົາໄດ້ຮັບພອນຫລາຍຂະໜາດໃດທີ່ໄດ້ມາສູ່ໂລກໃນວັນເວລາເຊັ່ນນີ້—ເປັນເວລາທີ່ປະເສີດລ້ຳໃນປະຫວັດສາດຂອງໂລກ. ເຮົາບໍ່ສາມາດມາເຕົ້າໂຮມຢູ່ໃນສະຖານທີ່ດຽວກັນ, ແຕ່ຕອນນີ້ເຮົາສາມາດຮັບຊົມຮັບຟັງກອງປະຊຸມນີ້ຕະຫລອດທົ່ວໂລກ ຜ່ານທາງໂທລະທັດ, ວິທະຍຸ, ເຄໂບ, ແລະ ດາວທຽມ—ແມ່ນແຕ່ທາງໂທລະສັບມືຖືນຳອີກ. ເຮົາມາເຕົ້າໂຮມກັນເປັນໜຶ່ງ, ກ່າວໃນຫລາຍພາສາ, ອາໄສຢູ່ໃນຫລາຍປະເທດ, ແຕ່ເຮົາທຸກຄົນມີສັດທາ ແລະ ຈຸດປະສົງອັນດຽວກັນ.

ຈາກການເລີ່ມຕົ້ນອັນນ້ອຍໆ 182 ປີກ່ອນ, ບັດນີ້ເຮົາໄດ້ຂະຫຍາຍໄປທົ່ວໂລກ. ອຸດົມການທີ່ຍິ່ງໃຫຍ່ຊຶ່ງເຮົາມີສ່ວນຮ່ວມ ຈະຂະຫຍາຍອອກໄປເລື້ອຍໆ, ປ່ຽນແປງ ແລະ ໃຫ້ພອນແກ່ຊີວິດດັ່ງທີ່ເປັນມາ. ບໍ່ມີອຸດົມການອື່ນໃດ, ບໍ່ມີພະລັງອື່ນໃດຢູ່ໃນໂລກນີ້ຈະສາມາດຢຸດຢັ້ງວຽກງານຂອງພຣະເຈົ້າໄດ້. ເຖິງແມ່ນຈະ

ມີຫຍັງເກີດຂຶ້ນ, ວຽກງານນີ້ຈະດຳເນີນໄປໜ້າ. ທ່ານຄົງຈື່ຈຳຖ້ອຍຄຳຂອງສາດສະດາໂຈເຊັບ ສະມິດ ໄດ້
ທີ່ວ່າ: “ບໍ່ມີມືໃດທີ່ສາມາດຢຸດຢັ້ງວຽກງານນີ້; ອາດມີການຂົ່ມເຫັງ, ສັດຕູອາດລວມຫົວກັນ, ກອງທັບອາດ
ເຕົ້າໂຮມກັນ, ການໃສ່ຮ້າຍປ້າຍສີອາດເກີດຂຶ້ນ, ແຕ່ຄວາມຈິງຂອງພຣະເຈົ້າຈະດຳເນີນໄປໜ້າຢ່າງອາດ
ຫານ, ຢ່າງມີກຽດ, ແລະ ຢ່າງເປັນອິດສະລະ, ຈົນກວ່າມັນຈະມີຢູ່ໃນທຸກທະວີບ, ໃນທຸກເຂດແດນ, ໃນ
ທຸກປະເທດ, ແລະ ທຸກຫູຈະໄດ້ຍິນ, ຈົນກວ່າຈຸດປະສົງຂອງພຣະເຈົ້າຈະສຳເລັດຄົບຖ້ວນ, ແລະ ພຣະເຢ
ໂຮວາຜູ້ຍິ່ງໃຫຍ່ຈະກ່າວວ່າ ວຽກງານສຳເລັດແລ້ວ.”[1]

ມີຫລາຍສິ່ງຫລາຍຢ່າງທີ່ຫຍຸ້ງຍາກ ແລະ ທ້າທາຍຫລາຍຢູ່ໃນໂລກທຸກວັນນີ້, ອ້າຍເອື້ອຍນ້ອງທັງຫລາຍ,
ແຕ່ກໍມີສິ່ງດີ ແລະ ເສີມສ້າງຄືກັນ. ດັ່ງທີ່ເຮົາປະກາດຢູ່ໃນຫລັກແຫ່ງຄວາມເຊື່ອຂໍ້ທີສິບສາມວ່າ
“ຫາກມີສິ່ງໃດທີ່ເປັນຄຸນນະທຳ, ສວຍງາມ, ຫລື ຄວນສັນລະເສີນ ພວກເຮົາສະແຫວງຫາສິ່ງເຫລົ່ານີ້.” ຂໍ
ໃຫ້ເຮົາຈົ່ງເຮັດແນວນັ້ນຕໍ່ໄປ.

ຂ້າພະເຈົ້າຂໍຂອບໃຈທ່ານສຳລັບສັດທາ ແລະ ການອຸທິດຕົນຂອງທ່ານຕໍ່ພຣະກິດຕິຄຸນ. ຂໍຂອບໃຈທ່ານ
ສຳລັບຄວາມຮັກ ແລະ ຄວາມເປັນຫ່ວງທີ່ມີຕໍ່ກັນແລະກັນ. ຂໍຂອບໃຈທ່ານສຳລັບການຮັບໃຊ້ຢູ່ໃນຫວອດ
ແລະ ສາຂາຂອງທ່ານ ແລະ ໃນສະເຕກ ແລະ ທ້ອງຖິ່ນຂອງທ່ານ. ເປັນເພາະການຮັບໃຊ້ນັ້ນ ພຣະຜູ້
ເປັນເຈົ້າຈຶ່ງສາມາດບັນລຸຈຸດປະສົງຂອງພຣະອົງຢູ່ໃນໂລກນີ້.

ຂ້າພະເຈົ້າຂໍຂອບໃຈທ່ານສຳລັບຄວາມເມດຕາຂອງທ່ານທີ່ມີຕໍ່ຂ້າພະເຈົ້າບໍ່ວ່າຂ້າພະເຈົ້າຈະໄປຫາບ່ອນໃດ
ກໍຕາມ. ຂໍຂອບໃຈທ່ານທີ່ໄດ້ອະທິຖານເພື່ອຂ້າພະເຈົ້າ. ຂ້າພະເຈົ້າຮູ້ສຶກເຖິງຄຳອະທິຖານເຫລົ່ານັ້ນ ແລະ
ມີຄວາມກະຕັນຍູຫລາຍ.

ບັດນີ້, ອ້າຍເອື້ອຍນ້ອງຂອງຂ້າພະເຈົ້າ, ເຮົາໄດ້ມານີ້ເພື່ອຈະໄດ້ຮັບການສິດສອນ ແລະ ດົນໃຈ. ເຮົາຈະ
ໄດ້ຍິນຂ່າວສານຕ່າງໆໃນລະຫວ່າງສອງມື້ນີ້. ຂ້າພະເຈົ້າຂໍໃຫ້ທ່ານແນ່ໃຈໄດ້ວ່າ ຜູ້ຈະກ່າວປາໄສໄດ້ຂໍ
ຄວາມຊ່ອຍເຫລືອຈາກສະຫວັນ ໃນຂະນະທີ່ພວກເພິ່ນຕຽມຂ່າວສານຂອງພວກເພິ່ນ. ພວກເພິ່ນໄດ້ຮັບ
ການດົນໃຈກ່ຽວກັບສິ່ງທີ່ພວກເພິ່ນຈະກ່າວກັບເຮົາ.

ພຣະບິດາເທິງສະຫວັນຂອງເຮົາຮູ້ຈັກເຮົາ ແລະ ຮູ້ຈັກຄວາມຕ້ອງການຂອງເຮົາ. ຂໍໃຫ້ເຮົາຈົ່ງເຕັມໄປດ້ວຍ
ພຣະວິນຍານຂອງພຣະອົງ ເມື່ອເຮົາຮັບຊົມຮັບຟັງກອງປະຊຸມນີ້. ນີ້ຄືຄຳອະທິຖານອັນຈິງໃຈຂອງຂ້າພະ
ເຈົ້າ ໃນພຣະນາມຂອງພຣະເຢຊູຄຣິດ, ອາແມນ.

ແຫລ່ງອ້າງອີງ

1. Teachings of Presidents of the Church: Joseph Smith (2007), 444.